ທະນາຄານແຫ່ງ ສປປ ລາວ
BANK OF THE LAO PDR
NEWS
ພະແນກຂໍ້ມູນຂ່າວສານ ແລະ ປະຊາສຳພັນ ຫ້ອງການ ທຫລ
ໂທ/ແຟກ (856-21) 213109, 213110

# ກອງປະຊຸມໃຫຍ່ຜູ້ແທນ ສະຫະພັນກຳມະບານ ທະນາຄານແຫ່ງ ສປປ ລາວ ຄັ້ງທີ IX




ໃນວັນທີ 30 ມິຖຸນາ 2025, ສະຫະພັນກຳມະບານ ທະນາຄານແຫ່ງ ສປປ ລາວ (ສກບ.ທຫລ) ໄດ້ເປີດກອງປະຊຸມໃຫຍ່ຜູ້ແທນ ຄັ້ງທີ IX ທີ່ສະໂມສອນໃຫຍ່ສະຖາບັນການທະນາຄານ, ພາຍໃຕ້ການເປັນປະທານຂອງສະຫາຍ ນ. ມະໂນລາ ເມືອງມະນີ ຮັກສາການ ປະທານ ສກບ.ທຫລ, ກອງປະຊຸມໃຫຍ່ຄັ້ງນີ້ເປັນກຽດຢ່າງສູງທີ່ໄດ້ຕ້ອນຮັບການເຂົ້າຮ່ວມ ຂອງ ສະຫາຍ ປອ. ນ. ບຸນຄຳ ວໍລະຈິດ ກຳມະການສູນກາງພັກ, ເລຂາຄະນະບໍລິຫານງານພັກ, ຜູ້ວ່າການ,ທຫລ ແລະ ສະຫາຍ ນ. ອາລິຍາວັນ ອັກຄະວົງ ຮອງເລຂາຄະນະບໍລິຫານງານພັກ, ຮອງປະທານສູນກາງສະຫະພັນກຳມະບານລາວ ມີແຂກເຂົ້າຮ່ວມຈາກ ສູນກາງສະຫະພັນກຳມະບານລາວ, ຫົວໜ້າກົມຈາກ ທຫລ, ຄະນະອຳນວຍການທະນາຄານທຸລະກິດ, ຜູ້ຕາງໜ້າຈາກ ຄະນະບໍລິຫານງານຊາວໜຸ່ມ ແລະ ຄະນະບໍລິຫານງານສະຫະພັນແມ່ຍິງ ທຫລ, ລວມມີຜູ້ເຂົ້າຮ່ວມທັງໝົດ 259 ສະຫາຍ, ຍິງ 99 ສະຫາຍ.

ກອງປະຊຸມໄດ້ຮັບຮອງເອົາ 3 ເອກະສານ ສຳຄັນຄື: (1). ບົດລາຍງານການເມືອງ, (2) ບົດສຳຫຼວດການນຳພາ ແລະ (3) ແຜນພັດທະນາ ວຽກງານກຳມະບານ ຂອງ ທຫລ 05 ປີ ຕໍ່ໜ້າ (2026-2030) ທີ່ປະກອບມີ 8 ແຜນງານ ແລະ 21 ໂຄງການ.

ນອກຈາກນີ້ກໍມີພິທີມອບໃບຍ້ອງຍໍ ດີເດັ່ນໃນການຈັດຕັ້ງປະຕິບັດວຽກງານກຳມະບານໃນຕະຫຼອດໄລຍະ 5 ປີ (2021-2025) ຈາກສູນກາງສະຫະພັນກຳມະບານລາວ ໃຫ້ກັບ ສກບ.ທຫລ ແລະ 8 ຮາກຖານກຳມະບານທີ່ຂຶ້ນກັບ ສກບ.ທຫລ.




ພ້ອມນີ້, ສະຫາຍ ປອ. ນ. ບຸນຄຳ ວໍລະຈິດ ກຳມະການສູນກາງພັກ, ເລຂາຄະນະບໍລິຫານງານພັກ, ຜູ້ວ່າການ, ທຫລ ໄດ້ກ່າວເນັ້ນໜັກໃນການເລືອກເຟັ້ນເອົາບຸກຄະລາກອນ ເພື່ອເປັນແກນນຳ-ນຳພາຊີ້ນຳປະຕິບັດວຽກງານ ກຳມະບານ ທຫລ ໃຫ້ໄດ້ຮັບຜົນສຳເລັດຕາມແຜນການທີ່ໄດ້ຂຶ້ນໄວ້ຢ່າງມີປະສິດທິຜົນ, ສະນັ້ນ ຜູ້ແທນສົມບູນ ຈຳນວນ 250 ສະຫາຍ, ເປັນຕົວແທນໃຫ້ສະມາຊິກກຳມະບານທັງໝົດ 3,131 ສະຫາຍ ຈາກ 8 ຮາກຖານ ເລືອກເອົາ ຄະນະບໍລິຫານງານ ສກບ.ທຫລ ຊຸດທີ IX ຈຳນວນ 17 ສະຫາຍ.

ກອງປະຊຸມຄັ້ງປະຖົມມະລຶກ ຂອງ ຄະນະບໍລິຫານງານ ສກບ.ທຫລ ຄັ້ງທີ IX ເລືອກເອົາ ສະຫາຍ ນ. ມະໂນລາ ເມືອງມະນີ ເປັນປະທານ ແລະ ຮອງປະທານ 3 ສະຫາຍ, ເລືອກຄະນະກວດກາ ຈຳນວນ 3 ສະຫາຍ ພ້ອມນີ້, ໄດ້ເລືອກຕັ້ງເອົາຜູ້ແທນໄປຮ່ວມກອງປະຊຸມໃຫຍ່ຜູ້ແທນ ຄະນະບໍລິຫານງານສູນກາງສະຫະພັນກຳມະບານລາວ ຄັ້ງທີ IX ຊຶ່ງມີຜູ້ແທນສົມບູນ ຈຳນວນ 06 ສະຫາຍ ແລະ ຜູ້ແທນສຳຮອງ ຈຳນວນ 02 ສະຫາຍ.

ກອງປະຊຸມໃຫຍ່ ໄດ້ຮັບຟັງການໂອ້ລົມຈາກ ສະຫາຍ ນ. ອາລີຍາວັນ ອັກຄະວົງ ຮອງເລຂາຄະນະບໍລິຫານງານພັກ, ຮອງປະທານສູນກາງສະຫະພັນກຳມະບານລາວ ໂດຍເນັ້ນເອົາ 2 ວາລະແຫ່ງຊາດນຳໄປຜັນຂະຫຍາຍເຂົ້າໃນການຈັດຕັ້ງປະຕິບັດວຽກງານຕົວຈິງ ພ້ອມທັງໃຫ້ສືບຕໍ່ນຳພາຈັດຕັ້ງປະຕິບັດມະຕິກອງປະຊຸມໃຫຍ່ຂອງຕົນ ໃຫ້ບັນລຸຕາມຄາດໝາຍ, ຍາດໄດ້ຜົນສຳເລັດອັນໃໝ່ທີ່ຍິ່ງໃຫຍ່ກວ່າເກົ່າ.



ໃນຕອນທ້າຍ, ທີ່ປະຊຸມໄດ້ຮັບຮອງເອົາມະຕິກອງປະຊຸມໃຫຍ່ຜູ້ແທນ ຄັ້ງທີ IX ຂອງ ຄະນະບໍລິຫານງານ ສກບ.ທຫລ. ກອງປະຊຸມດັ່ງກ່າວ ໄດ້ດຳເນີນເປັນເວລາເຄິ່ງວັນ ແລະ ໄດ້ສຳເລັດລົງຢ່າງຈົບງາມ ຕາມຈຸດປະສົງ ລະດັບຄາດ ໝາຍທີ່ວ່າງໄວ້.

**ຂ່າວ-ພາບ: ຫ້ອງການທະນາຄານແຫ່ງ ສປປ ລາວ**

*ຢູ່ເມືອງລາວ ໃຊ້ເງິນກີບລາວ*